ວັດທະນະທຳຈີນ

# ບົດກະວີ ແລະ ທາງໄກ ສຳລັບ ນັກຮຽນເຂດຫ່າງໄກສອກຫຼີກ




ຈາກເຂດຫ່າງໄກສອກຫຼີກແຫ່ງໜຶ່ງຂອງແຂວງຢຸນນານ ໄປຫານະຄອນນິວຢອກຂອງອາເມຣິກາ ຈະໄກຊ່ຳໃດ? ອາດຈະຫ່າງໄກກັນປານບົດກະວີບົດໜຶ່ງເທົ່ານັ້ນ.

"ຂ້າພະເຈົ້າເຊື່ອໝັ້ນຄ່ຳຄືນທີ່ມືດມິດ, ຍ້ອນວ່າມັນສາມາດປົກປິດທຸກສິ່ງທຸກຢ່າງ, ເໝືອນດັ່ງຄວາມຮັກ." ປີ 2020, ໜ້າຈໍໃຫຍ່ຢູ່ສະໜາມຫຼວງ ນິວຢອກທາມ ໄດ້ເຜີຍແຜ່ບົດກະວີທີ່ພາດຫົວຂໍ້ວ່າ: "ຄ່ຳຄືນທີ່ມືດມິດ" ເປັນອາທິດໜຶ່ງຕິດຕໍ່ກັນ, ຜູ້ຂຽນແມ່ນ ນາງ ຫຼີຫຼີງ (Li Ling) ທີ່ມາຈາກຕາແສງໝາງສຸຍເມືອງຊາງນິງ ນະຄອນປາວຊານແຂວງຢຸນນານ ຈີນ. ນາງ ຫຼີຫຼີງ ແມ່ນໜຶ່ງໃນ "ນັກກະວີໜຸ່ມໝາງສຸຍ". ຢູ່ຕາແສງໝາງສຸຍທີ່ມີພູອ້ອມທັງສີ່ດ້ານ, ການສຶກສາກ່ຽວກັບກະວີ ໄດ້ດຳເນີນມາເປັນເວລາ 8 ປີແລ້ວ.

ຢູ່ຊົນນະບົດຂອງຈີນ, ການສຶກສາກ່ຽວກັບບົດກະວີ ພວມໄດ້ປ່ຽນແປງຊີວິດການເປັນຢູ່ຂອງເດັກນ້ອຍຊົນນະບົດ ເທື່ອລະກ້າວ. ພວກເຂົາເຈົ້າໄດ້ຄົ້ນພົບຄວາມງາມໃນຊີວິດ ແລະ ສະແດງອາລົມຈິດຂອງຕົນດ້ວຍບົດກະວີ ເພື່ອກ້າວໄປສູ່ເວທີທີ່ໃຫຍ່ກວ່າເກົ່າ.

## ກຳລັງ ຊຸກຍູ້ການເຕີບໂຕຂອງໝູ່ນັກຮຽນ

"ຖ້າຂ້ອຍເປັນດອກໄມ້ດວງໜຶ່ງ, ເພື່ອນມິດຂ້ອຍຈະຮັກແພງຂ້ອຍ. ພວກເຂົາເຈົ້າບໍ່ວ່າເປັນເດັກຊາຍ ຫຼື ເດັກຍິງ, ລ້ວນແຕ່ຮັກແພງຂ້ອຍ. ຖ້າຂ້ອຍເປັນດອກໄມ້ດວງໜຶ່ງ, ກໍເປັນເລື່ອງທີ່ດີພໍສົມຄວນ." ນີ້ແມ່ນບົດກະວີ ທີ່ພາດຫົວຂໍ້ວ່າ: "ຖ້າຂ້ອຍເປັນດອກໄມ້ດວງໜຶ່ງ" ທີ່ຂຽນໂດຍ: ນາງ ຢູຫຼຽນເຈຍ (Yu Lianjie) ນັກຮຽນອາຍຸ 9 ປີຂອງໂຮງຮຽນປະຖົມສົມບູນບ້ານໜົງຮວາ ຕາແສງໝາງສຸຍ (Mangshui) ເມືອງຊາງນິງ (Changning) ນະຄອນປາວຊານ (Baoshan) ແຂວງຢຸນນານ.

ເລີ່ມຕົ້ນສົກຮຽນໃໝ່ ໃນເດືອນກັນຍາຜ່ານມາ, ນາງ ຢູຫຼຽນເຈຍ ແລະ ໝູ່ນັກຮຽນໄດ້ມີຫຼັກສູດໃໝ່ ຄື: ຫຼັກສູດສອນບົດກະວີ. ນາງ ຫຼີຊູຮວາ (Li Shuhua) ຄູສອນ ຫຼັກສູດດັ່ງກ່າວ ໄດ້ນຳພາໝູ່ນັກຮຽນເດີນທາງອອກຈາກຫ້ອງຮຽນ ແລະ ໄປແຕ່ງບົດກະວີ ຢູ່ຕາມທຳມະຊາດ ທີ່ມີທ້ອງຟ້າປອດໂປ່ງສົດໃສ. ນາງ ຢູຫຼຽນເຈຍ ກໍໄດ້ຂຽນບົດກະວີບົດນີ້ ໃນໂມງຮຽນບົດກະວີ. ນາງເວົ້າວ່າ: "ໂມງຮຽນບົດກະວີ ເຮັດໃຫ້ຂ້ອຍຮູ້ສຶກມ່ວນຊື່ນຫຼາຍ, ສາມາດຂຽນຄຳເວົ້າໃນໃຈຂອງຕົນເປັນບົດກະວີ."

ໃນສາຍຕາຂອງ "ນັກກະວີໜຸ່ມ" ຂອງຕາແສງໝາງສຸຍ, ບົດກະວີ ມີຄວາມໝາຍພິເສດຫຼາຍ. ພວກເຂົາເຈົ້າ ໄດ້ເຕີບໃຫຍ່ຂະຫຍາຍຕົວໃນທ່າມກາງບົດກະວີ, ໄດ້ສຳຜັດກັບຄວາມອົບອຸ່ນ ແລະ ຄວາມສວຍງາມ. ນາງ ວາງຊຸນຫຼິນ (Wang Chunlin) ນັກຮຽນ ປໍ 3 ຂອງໂຮງຮຽນມັດທະຍົມຕົ້ນໝາງສຸຍ, ນາງ ໄດ້ສຳຜັດກັບບົດກະວີ ໃນໄລຍະນາງຮຽນ ປໍ 3, ປັດຈຸບັນ, ນາງ ໄດ້ຂຽນບົດກະວີ 200 ກວ່າບົດແລ້ວ. ນາງເວົ້າວ່າ: "ກະວີ ໄດ້ໃຫ້ການສະໜັບສະໜູນ ດ້ານອາລົມຈິດຫຼາຍຢ່າງໃຫ້ແກ່ຂ້າພະເຈົ້າ, ເຮັດໃຫ້ຈິດໃຈຂອງຂ້າພະເຈົ້າມີຄວາມເບີກບານກວ່າເກົ່າ."

ນາງ ວາງຊິງລູ ນັກຮຽນ ມໍ 3 ຂອງໂຮງຮຽນມັດທະຍົມຕົ້ນໝາງສຸຍ ກ່າວວ່າ: "ພາຍຫຼັງສຳຜັດກັບບົດກະວີແລ້ວ, ຂ້າພະເຈົ້າ ໄດ້ຄົ້ນພົບວິທີລະບາຍອາລົມແບບອ່ອນໂຍນ, ມັນຈະປອບໃຈຂ້າພະເຈົ້າ, ເຮັດໃຫ້ຄວາມໂມໂຫ ແລະ ຄວາມໂສກເສົ້າຂອງຂ້າພະເຈົ້າ ສູນຫາຍໄປ ພ້ອມທັງສາມາດສະແດງໃຫ້ເຫັນຄວາມຮັກຂອງຂ້າພະເຈົ້າ." ນາງ ກ່າວຕື່ມວ່າ: ການຂຽນບົດກະວີ ເປັນເລື່ອງທຳມະດາສາມັນ, ລາວຍັງໄດ້ຂຽນບົດກະວີເວົ້າຕະຫຼົກໃສ່ໝູ່ເພື່ອນ ແລະ ແລກປ່ຽນກັບໝູ່ເພື່ອນດ້ວຍບົດກະວີ.

ຢູ່ໂຮງຮຽນປາຖະໜາຊູຢູ ເມືອງຮຸຍຖົງ (Huitong) ນະຄອນຮວຍຮວາ (Huaihua) ແຂວງຫູໜານ ກໍເຊັ່ນດຽວກັນ. ນາງ ລົງເມິງຢາວ (Long Mengyao) ນັກກະວີນ້ອຍໃນ "ຫ້ອງກະວີລູກທົ່ງ" ໂຮງຮຽນປາຖະໜາຊູຢູ ກ່າວວ່າ: ການຂຽນບົດກະວີ ເຮັດໃຫ້ຊີວິດຂອງຂ້າພະເຈົ້າອຸດົມສົມບູນກວ່າເກົ່າ, ຂ້າພະເຈົ້າ ມັກສັງເກດໂລກນີ້ຫຼາຍກວ່າເກົ່າອີກ." ນາງເວົ້າວ່າ: "ເມື່ອຂ້າພະເຈົ້າໃຫຍ່ຂຶ້ນແລ້ວ, ຢາກເປີດຮ້ານບົດກະວີ ເພື່ອເຮັດທຸລະກິດກ່ຽວກັບເລື່ອງກະວີ."

ປີ 2017, ທ່ານ ຫຼີໂປລິນ (Li Bolin) ຄູສອນ ທີ່ເກີດຫຼັງປີ 1995 ຂອງໂຮງຮຽນປາຖະໜາຊູຢູ ໄດ້ສ້າງຕັ້ງ "ຫ້ອງກະວີລູກທົ່ງ". ທ່ານກ່າວວ່າ: ຂ້າພະເຈົ້າ ບໍ່ພຽງແຕ່ສົນໃຈນຳການຂຽນບົດກະວີຂອງເດັກນ້ອຍທັງຫຼາຍເທົ່ານັ້ນ, ຍິ່ງຫວັງວ່າ: ສາມາດກະຕຸກຊຸກຍູ້ຄວາມສາມາດບົ່ມຊ້ອນຂອງພວກເຂົາເຈົ້າ ໂດຍຜ່ານການຂຽນບົດກະວີ." ທ່ານ ກ່າວຕື່ມອີກວ່າ: ຕົນຫວັງວ່າ ສາມາດຊ່ວຍເດັກນ້ອຍທັງຫຼາຍ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໂດຍຜ່ານຈາກກຳລັງຂອງວັນນະຄະດີ.

## ເຝົ້າຮັກສາ "ບົດກະວີ ແລະ ທາງໄກ"

ນັກຮຽນທັງຫຼາຍ ໄດ້ສະແດງໃຫ້ເຫັນເຖິງຄວາມອ່ອນໂຍນ ແລະ ຄວາມປານິດໃນບົດກະວີຂອງຕົນ ເຊິ່ງໄດ້ເຮັດໃຫ້ ນາງ ຈ່າງຈືລານ (Zhang Zilan) ຄູສອນໂຮງຮຽນມັດທະຍົມຕົ້ນໝາງສຸຍກະຕຸ້ນໃຈນຳ. ນາງ ເວົ້າວ່າ: ບົດກະວີເປັນຂົວຕໍ່ລະຫວ່າງຕົນກັບນັກຮຽນ. ໂດຍຜ່ານຈາກບົດກະວີ, ນາງສາມາດເຂົ້າໃຈຄວາມຄິດຂອງນັກຮຽນທັງຫຼາຍ ແລະ ຮັບຮູ້ເຖິງຄວາມປ່ຽນແປງດ້ານອາລົມຂອງນັກຮຽນ.

ທ່ານ ຢູຊຸນຢຸນ (Yu Chunyun) ເລຂາຄະນະພັກໂຮງຮຽນ ໃຈກາງຕາແສງໝາງສຸຍ ກ່າວວ່າ: "ພວກເຮົາ ໄດ້ຄົ້ນຫາວິທີນຳພາໃຫ້ໝູ່ນັກຮຽນທັງຫຼາຍ ມີຄວາມກະຕືລືລົ້ນໃນດ້ານສູນທອນພິດ ເຊັ່ນ: ການແຕ້ມຮູບ, ດົນຕີ ຫຼື ການຟ້ອນ. ແຕ່ພາຍຫຼັງມາ, ພວກເຮົາເຫັນວ່າ: ການຂຽນບົດກະວີ ຈະເປັນວິທີທີ່ງ່າຍທີ່ສຸດ, ຖ້າທ່ານມີເຈ້ຍມີສໍ, ທ່ານກໍສາມາດຂຽນບົດກະວີໄດ້ແລ້ວ.

ນັບແຕ່ປີ 2016 ເປັນຕົ້ນມາ, ໂຮງຮຽນໃຈກາງຕາແສງໝາງສຸຍ ແລະ ໂຮງຮຽນມັດທະຍົມຕົ້ນໝາງສຸຍ ເລີ່ມການທົດລອງເຂົ້າຮ່ວມການສຶກສາບົດກະວີ. ປີ 2019, ຕາແສງໝາງສຸຍ ໄດ້ເປີດຫຼັກສູດບົດກະວີພາຍໃຕ້ 4 ຫົວຂໍ້ຄື: ແສງສະຫວ່າງໃນລະດູບານໃໝ່, ພາບວິວໃນລະດູຮ້ອນ, ດວງຕາເວັນໃນລະດູໃບໄມ້ຫຼົ່ນ ແລະ ຕາເວັນອົບອຸ່ນໃນລະດູໜາວ ໃຫ້ແກ່ນັກຮຽນ ປໍ 3 ຫາ ມໍ 7 ທົ່ວຕາແສງ, ຫຼັກສູດໜຶ່ງຈະມີ 3 ຊົ່ວໂມງຮຽນ.

ນາງ ຈ່າງຈືລານ ເຫັນວ່າ: "ໂດຍຜ່ານຈາກບົດກະວີ, ຂ້າພະເຈົ້າ ຈະສາມາດເຂົ້າໃຈນັກຮຽນໄດ້ດີກວ່າເກົ່າ ແລະ ມີຈິດໃຈກວມລວມຫຼາຍກວ່າເກົ່າຕໍ່ພວກເຂົາເຈົ້າ." ນາງເວົ້າວ່າ: ນັກຮຽນທັງຫຼາຍຈະມີພອນສະຫວັນໃນການຂຽນບົດກະວີ, ພວກເຂົາເຈົ້າ ມີຄວາມຮັກທີ່ອຸດົມສົມບູນທີ່ສຸດ, ຄູສອນວິທີຂຽນໃຫ້ແກ່ພວກເຂົາເຈົ້າ, ພວກເຂົາເຈົ້າ ກໍຈະສາມາດຂຽນບົດກະວີ ທີ່ເຕັມໄປດ້ວຍຄວາມມີຊີວິດຊີວາ. "ການສຶກສາແມ່ນເມກຜືນໜຶ່ງຊຸກດັນເມກອີກຜືນໜຶ່ງ, ຂ້າພະເຈົ້າ ກໍໄດ້ຮັບເອົາກຳລັງຊຸກດັນທີ່ບໍ່ມີວັນສິ້ນສຸດຈາກບົດກະວີຂອງໝູ່ນັກຮຽນທັງຫຼາຍ."

ເພື່ອປົກປັກຮັກສາ "ບົດກະວີ ແລະ ທາງໄກ" ໃຫ້ແກ່ເດັກນ້ອຍຢູ່ຊົນນະບົດ, ອົງການສາທາລະນະປະໂຫຍດຕ່າງໆຂອງຈີນ ກໍໄດ້ເຮັດກິດຈະກຳຫຼາຍຢ່າງ. ປີ 2018, ສະໂມສອນ "ບົດກະວີຊີກວາງ" ທີ່ເປັນອົງການສາທາລະນະປະໂຫຍດດ້ານການສຶກສາບົດກະວີ ຢູ່ຊົນນະບົດແຫ່ງທຳອິດຂອງຈີນ ໄດ້ສ້າງຕັ້ງຂຶ້ນ ໂດຍໄດ້ສົ່ງເສີມໃຫ້ຖືເອົາບົດກະວີເປັນວິທີຊ່ວຍເດັກນ້ອຍຊົນນະບົດສະແດງຄວາມຮັກຂອງຕົນ ແລະ ເປັນເພື່ອນທາງຈິດໃຈໃຫ້ແກ່ເດັກນ້ອຍເຫຼົ່ານີ້.

ທ່ານ ຄາງຢູ (Kang Yu) ໜຶ່ງໃນຜູ້ສ້າງຕັ້ງສະໂມສອນ "ບົດກະວີຊີກວາງ" ກ່າວວ່າ: "ພວກເຮົາສອນເດັກນ້ອຍຂຽນບົດກະວີ ມີແຕ່ຢາກບອກພວກເຂົາເຈົ້າວ່າ: ໃນການເຕີບໃຫຍ່ພຽງເທື່ອດຽວ ໃນຊີວິດຂອງຕົນ, ຄວນຮັກຫອມການຄົ້ນຄວ້າ ແລະ ຮັກສາຄວາມອ່ອນໄຫວ ຕໍ່ການສຳຜັດທຸກສິ່ງຂອງ." ທ່ານ ກ່າວຕື່ມວ່າ: ນັບແຕ່ສະໂມສອນຕົນສ້າງຕັ້ງຂຶ້ນ ຈົນເຖິງປີ 2023, ໄດ້ບໍລິການໂຮງຮຽນຊົນນະບົດ 1.700 ກວ່າແຫ່ງ, ໄດ້ສ້າງຜົນປະໂຫຍດໃຫ້ແກ່ເດັກນ້ອຍຊົນນະບົດ 150.000 ກວ່າຄົນ ໃນ 28 ແຂວງ, ເຂດ ແລະ ກຳແພງນະຄອນຂອງຈີນ.

ເດືອນກໍລະກົດປີ 2023, ຫ້ອງສະຕູດີໂອການຂຽນແບບມີຫົວຄິດປະດິດສ້າງຂອງທ່ານຫຼີໂປລິນ ໄດ້ສ້າງຕັ້ງຂຶ້ນ ເຊິ່ງໄດ້ດຶງດູດຄູສອນ 10 ທ່ານເຂົ້າຮ່ວມ. ໃນຫ້ອງສະຕູດີໂອດັ່ງກ່າວ, ຄູສອນຄະນິດສາດໄດ້ເອົາວິທີ "ບວກ, ລົບ, ຄູນ ແລະ ຫານ" ເຊື່ອມໂຍງເຂົ້າໃນບົດກະວີ, ຄູສອນວິຈິດສິນໄດ້ສອນເດັກຮຽນທັງຫຼາຍແຕ້ມບັນຍາກາດບົດກະວີຢູ່ຕາມກ້ອນຫີນ, ຄູສອນດົນຕີ ໄດ້ສອນເດັກຮຽນທັງຫຼາຍຂຽນທຳນອງເພງໃຫ້ແກ່ບົດກະວີຂອງຕົນ ເພື່ອໄປຄົ້ນຄວ້າຄວາມເລິກລັບໃນບົດກະວີ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

